**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 28 ມີນາ 2009 (03-28-2010)**

---

## <u>ເມື່ອນະມັສການບໍ່ໄດ້ຖວາຍກຽດພຣະເຈົ້າ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (1 ໂກຣິນໂທ 11:17-34)

### <u>ເປົ້າໝາຍຂອງບົດຮຽນ:</u>

ບົດຮຽນນີ້ແມ່ນກ່ຽວກັບການປະຕິບັດທີ່ເປັນພື້ນຖານອັນສຳຄັນໃນການປະກອບການທຳພິທີສິນມະຫາສນິດ ແລະຂໍ້ມູນຂອງປະສົບການທັງໝົດໃນການນະມັສການ.

### <u>ຄວາມສຳຄັນຂອງບົດຮຽນ:</u>

ບົດຮຽນນີ້ມີຄວາມສຳຄັນຫລາຍ ເພາະໃນພວກຜູ້ໃຫຍ່ຈຳນວນນຶ່ງ ໃນເວລາທຳພິທີ ການນະມັສການນັ້ນ ສ່ວນໃຫຍ່ມັກຈະສຸມຈຸດສົນໃຈໃສ່ຄວາມສຳຄັນທີ່ຕົວເອງ ແລະອັນໃດທີ່ເປັນຄວາມຫວັງຈາກປະສົບການຂອງເຂົາເຈົ້າ. ໃນຂະນະທີ່ເຮົານັ່ງຢູ່ໃນສະຖານທີ່ນະມັສການ, ຄວາມຕັ້ງໃຈຂອງພວກເຮົາໃນເວລານັ້ນ ຄວນຈະມີໃຈຈົດຈໍ່ໃສ່ໃນພຣະຄຣິດ ແລະສິ່ງທີ່ພຣະອົງໄດ້ກະທຳເພື່ອທຸກໆຄົນທີ່ເຊື່ອ ແລະເພື່ອຄຣິສຕະຈັກ.

### <u>ຜົນສະທ້ອນຕໍ່ຊີວິດ:</u>

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ໄດ້ຄິດທົບທວນເບິ່ງອຸປນິສັຍທີ່ຜ່ານມາ ທີ່ເປັນການຂັດຂວາງຕໍ່ຄວາມສຳຄັນໃນກຸ່ມປະຊຸມນະມັສການຂອງພວກເຮົາ.

### <u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### <u>ແນະນຳ:</u>

- ບ່ອນໃດທີ່ບາງໂບດ ແລະບາງສະມາຊິກສ່ອງແສງສວ່າງໃສ່ໃນເວລານະມັສການ?
- ບົດຮຽນນີ້ຈະໄດ້ຊ່ວຍໃຫ້ພວກເຮົາຮູ້ເຖິງຄຣິສຕະຈັກທີ່ດຳເນີນໄປໃນທາງທີ່ຜິດ, ໃນເມື່ອສະມາຊິກໃນຄຣິສຕະຈັກຫາການະມັສການໂດຍບໍ່ໄດ້ຖວາຍກຽດແດ່ພຣະເຈົ້າ. ບົດຮຽນນີ້ຈະຊີ້ໃຫ້ພວກເຮົາເຫັນເຖິງບ່ອນທີ່ພວກເຮົາຈະສ່ອງແສງສວ່າງເຂົ້າໄປ ສະນັ້ນໂບດຂອງພວກເຮົາສາມາດທີ່ມີຄວາມຜູກພັນການນະມັສການຢ່າງມີຄວາມໝາຍຢ່າງເຕັມປ່ຽມໄດ້.

1. **<u>ຮ່ວມກັນເປັນອັນນຶ່ງອັນດຽວ:</u>** (1 ໂກຣິນໂທ 11:17-22,33-34)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 11:17-22,33-34
- ຄວາມສຳເຣັດຂອງທ່ານໂປໂລໃນຂໍ້ທີ 20-21 ນັ້ນ ຖ້າຫາກການເວົ້າຂອງລາວເປັນການເວົ້າເຖິງຄຣິສຕະຈັກໃນສັຕວັດທີ 21. ຂໍໃຫ້ອະທິບາຍເຖິງການຮ້ອງເພງສັຣເສີນໂດຍບໍ່ຈິງໃຈສັຣເສີນພຣະເຈົ້າ, ການອະທິຖານໂດຍບໍ່ຈິງໃຈ ໂດຍທີ່ບໍ່ໄດ້ຍິນສຽງພຣະຄຳສູ່ກັນຟັງເພື່ອຈະໄດ້ພ້ອມກັນເປັນນໍ້ານຶ່ງໃຈດຽວກັນ.
- ອັນໃດທີ່ເປັນການຂຍາຍກິຈກັມການນະມັສການທີ່ເຮັດໃຫ້ການນະມັສການມີປະສິດທິພາບຫລາຍຂຶ້ນກວ່າການເຮັດໃຫ້ມີການລົດນ້ອຍຖອຍລົງໃນຄຣິສຕະຈັກເມືອງໂກຣິນໂທ? ພິທີສິນລະນຶກໃນຄຣິສຕະຈັກເມືອງໂກຣິນໂທໄດ້ແບ່ງໃຫ້ມີ ແລະບໍ່ມີແນວໃດໃນພວກຜູ້ປົກຄອງ.
- ແມ່ນຫຍັງແດ່ທີ່ເຂົາເຈົ້າໄດ້ພຍາຍາມສ່ອງແສງເຂົ້າໄປເຖິງທາງດ້ານເສຖກິດ ແລະສູ່ສັງຄົມແນວໃດ? ໃນເມື່ອພວກເຮົາຫາກສ່ອງແສງສວ່າງນີ້ເຂົ້າໄປໃນຕົວຂອງພວກເຮົາເອງແລ້ວແມ່ນຫຍັງຈະເກີດຂຶ້ນ?
- ທ່ານໂປໂລໄດ້ປະເມີນຄຸນຄ່າໃນການຮັກສາໃນຂໍ້ທີ 33-34ໄວ້ຢ່າງໃດ ມັນສາມາດເຮັດໃຫ້ຄຣິສຕຽນສມັຍນີ້ມີຈຸດສຸມໃສ່ໃນການສ່ອງສວ່າງຮ່ວມກັນໄດ້ບໍ່?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 11:17-22,33-34)

1. ເປັນເພາະເຫດໃດຄຣິສຕຽນຊາວເມືອງໂກຣິນໂທຈຶ່ງສາມາດກາຍມາເປັນອັນນຶ່ງອັນດຽວກັນໄດ້?
2. ເປັນດ້ວຍເຫດໃດບາງຄຣິສຕະຈັກໃນສມັຍນີ້ຈຶ່ງມີຄວາມເປັນອັນນຶ່ງອັນດຽວກັນ?
3. ໃນການເມີນເສີຍໃນການເປັນອັນນຶ່ງອັນດຽວກັນໃນຄຣິສຕະຈັກເຮັດໃຫ້ການມີຄວາມໝາຍໃນການທຳພິທີສິນລະນຶກ ແລະການນະມັສການຕ່າງໆມີປະສົບການແບບໃດ?
4. ສະມາຊິກໃນຄຣິສຕະຈັກເວົ້າວ່າພຣະເຈົ້າຊົງແບ່ງພວກເຂົາເຈົ້າໃຫ້ເປັນອະວັຍວະພາກສ່ວນຕ່າງໆກັນແລ້ວເຂົາເຈົ້າໄດ້ເຮັດຫຍັງເພື່ອຊຶ່ງກັນແລະກັນແດ່?

2. **<u>ຈົ່ງເບິ່ງໄປທີ່ພຣະເຢຊູ:</u>** (1 ໂກຣິນໂທ 11:23-26)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 11:23-26
- ທ່ານໂປໂລໄດ້ສ່ອງແສງສວ່າງໃສ່ໃສເພື່ອໃຫ້ຊາວເມືອງໂກຣິນໂທກັບມາປັກຕາໃສ່?
- ບອກນັກຮຽນໃຫ້ເບິ່ງພື້ນຖານຄຣິສຕະຈັກຄືນຫລັງ ໂດຍໃຫ້ເລີ້ມຕົ້ນວ່າ ໃຜ, ແມ່ນຫຍັງ, ເມື່ອໃດ, ທີ່ໃດ ແລະເປັນດ້ວຍເຫດໃດ ເຣື່ອງການທຳພິທີສິນລະນຶກ.
- ເຮັດແນວໃດພວກເຮົາຈຶ່ງຈະກັບຄືນໄປສູ່ພື້ນຖານໃນການນະມັສການຂອງພວກເຮົາໄດ້?
- ເປັນຫຍັງພວກເຮົາຈຶ່ງມີການຮ້ອງເພງ? ອະທິຖານ? ຟັງເທສນາ? ເຂົ້າຫ້ອງຮຽນວັນອາທິດ?
- ພວກເຮົາເອົາແສງສວ່າງຂອງພຣະເຢຊູເຂົ້າສ່ອງໃນກິຈກັມທຸກຢ່າງໄດ້ຢ່າງໃດ?
- ລອງສັງເກດເບິ່ງວ່າເປັຍຫຍັງຜູ້ທີ່ເຊື່ອທັງຫລາຍທີ່ເປັນສະມາຊິກຈຶ່ງມີສ່ວນໃນການທຳພິທີສິນລະນຶກ. **ນັ້ນ** ໄດ້ຊີ້ໃຫ້ເຫັນວ່າ ພວກເຮົາບໍ່ພຽງແຕ່ຈົດຈຳການວາຍພຣະຊົນຂອງພຣະອົງເທົ່ານັ້ນ, ແຕ່ເບິ່ງທີ່ຄວາມຮັກ, ການໄຖ່ໂທດຄວາມຜິດບາບ, ຄວາມຫວັງ, ການຊົງຮັບຜິດບາບແທນພວກເຮົາ, ພຣະປະສົງ , ແລະຣິດທານຸພາບຂອງພຣະອົງດ້ວຍ.
- ພວກເຮົາຈະຮັກສາລັກສະນະຄວາມຈົດຈຳອັນສຳຄັນນີ້ໄວ້ຢ່າງໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (1 ໂກຣິນໂທ 11:23-26)

1. ທ່ານສາມາດສັງເກດໄດ້ແນວໃດວ່າການທຳພິທີສິນລະນຶກນີ້ເປັນເໝືອນຕົ້ນເດີມທີ່ຕັ້ງໄວ້ ຊາວເມືອງໂກຣິນໂທເຮັດແນວໃດກັບພິທີນີ້?
2. ເຮັດແນວໃດເພື່ອຈະໃຫ້ຄຸ້ນເຄີຍກັບການຮັບພິທີສິນລະນຶກນີ້ ເພື່ອບໍ່ໃຫ້ເປັນການໝິ່ນປມາດ?
3. ໃນເວລາພວກເຮົາກິນເຂົ້າຈີ່ ແລະນ້ຳອະງຸ່ນພຣະເຢຊູໄດ້ຮຽກຮ້ອງໃຫ້ເຮັດແນວໃດ?

3 . **<u>ຈົ່ງພິຈາຣະນາເບິ່ງຕົວຂອງພວກເຮົາເອງ:</u>** (1 ໂກຣິນໂທ 11:27-32)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 11:27-32
- ບັນດາຜູ້ທີ່ເຊື່ອສົມຄວນເປີດຈຸດສົນໃຈຂອງຕົນເອງ.
- ພວກເຮົາຄວນຈະຫລີກເວັ້ນການຕັດສິນ ແລະການລົງໂທດໄດ້ຢ່າງໃດ? ພວກເຮົາຈະນະມັສການຢ່າງໃດ?
- ການທີ່ເຮັດນິສັຍບໍ່ດີຕໍ່ຜູ້ອື່ນ ແລະການນະມັສການ, ຄວາມໜ້າໄຫວ້ຫລັງຫລອກ, ຈອມປອມ, ຄວາມເຫັນແກ່ຕົວ, ບໍ່ຍອມແບ່ງປັນ, ຄວາມແຕກແຍກການເປັນພີ່ເປັນນ້ອງກັນ, ຄວາມເສັງຫາຍ, ບໍ່ຍອມສາຣະພາບຜິດບາບ (ນີ້ເປັນຕົວຢ່າງທີ່ນຳໄປສູ່ການຕັດສິນລົງໂທດ)
- ຄຣິສຕຽນສ່ວນຫລາຍເຂົາເຈົ້າຄິດວ່າເຂົາເຈົ້າບໍ່ສົມຄວນຈະເຂົ້າຮ່ວມພິທີສິນລະນຶກ.
- ແມ່ນຫຍັງທີ່ພວກເຮົາຄວນກະທຳ ໃນເມື່ອແສງສວ່າງໄດ້ເປີດເຜີຍຄວາມບາບ ການກະທຳ ແລະອຸປນິສັຍຂອງພວກເຮົາ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 1 ໂກຣິນໂທ 11:27-32

1. ຜົນທີ່ຕາມມາຂອງທາງຂອງຊາວໂກຣິນໂທທີ່ບໍ່ສົມຄວນມີສ່ວນຮ່ວມພິທີສິນລະນຶກນັ້ນແມ່ນຫຍັງ?
2. ເປັນເພາະເຫດໃດພຣະຜູ້ເປັນເຈົ້າຈຶ່ງລົງໂທດຜູ້ທີ່ເຊື່ອ ໃນເມື່ອເຂົາເຈົ້ານະມັສການທີ່ບໍ່ໃຫ້ກຽດແດ່ພຣະເຈົ້າ?
3. ສະມາຊິກຄຣິສຕະຈັກສ່ວນຫລາຍໄດ້ຈັດຕຽມການທຳພິທີສິນລະນຶກຮ່ວມກັນຢ່າງໃດ? ຄຣິສຕະຈັກຂອງພວກເຮົາເດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ຄຣິສຕຽນເຂົາເຈົ້າຮັກ ແລະສົ່ງເສີມຊຶ່ງກັນແລະກັນໃຫ້ຮ່ວມໃຈກັນເປັນອັນນຶ່ງອັນດຽວກັນໃນຄຣິສຕະຈັກ.
- ຄຣິສຕຽນເຂົາເຈົ້າແບ່ງປັນຊຶ່ງກັນແລະກັນ ແລະຊອກຫາທາງພົບປະກັບບັນດາຜູ້ທີ່ເຊື່ອອື່ນໆດ້ວຍ.
- ຣິສຕຽນຄວນຕ້ອງຈົດຈໍ່ທີ່ພຣະເຢຊູຄຣິດ ແລະແບບຢ່າງຄວາມເປັນມະນຸດຂອງພຣະອົງ ແລະຮັບໃຊ້ຄົນອື່ນຊຶ່ງສະແດງອອກເຖິງໃນການວາຍພຣະຊົນເທິງໄມ້ກາງແຂນຂອງພຣະອົງເພື່ອຄວາມບາບພວກເຮົາ.
- ຄຣິສຕຽນຄວນສຳຫລວດກວດເບິ່ງຕົນເອງທີ່ຍັງບໍ່ໄດ້ສາຣະພາບບາບກ່ອນເຂົ້າຮ່ວມພິທີສິນລະນຶກ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**